# ມາດຕະຖານ
# ສະມັດຖະພາບດ້ານ ICT
# ຂອງຄູ ໃນ ສປປ ລາວ

ກົມສ້າງຄູ
ກະຊວງສຶກສາທິການ ແລະ ກິລາ
ມັງກອນ 2022

# ມາດຕະຖານ

# ສະມັດຖະພາບດ້ານ ICT

# ຂອງຄູ ໃນ ສປປ ລາວ

ກົມສ້າງຄູ

ກະຊວງສຶກສາທິການ ແລະ ກິລາ

ມັງກອນ 2022

# ຄຳນຳ

ການພັດທະນາມາດຕະຖານສະມັດຖະພາບດ້ານ ICT ຂອງຄູໃນ ສປປ ລາວ ໃນຄັ້ງນີ້ແມ່ນໄດ້ດຳເນີນໃນໂຄງການຍົກລະດັບການຝຶກອົບຮົມຄູ ຜ່ານການນຳໃຊ້ລະບົບດິຈິຕອນ ເພື່ອອຳນວຍຄວາມສະດວກໃນການຮຽນ-ການສອນທີ່ນຳໃຊ້ ICT; ເປັນໂຄງການໜຶ່ງທີ່ໄດ້ຮັບການສະໜັບສະໜູນ ແລະ ຮ່ວມມືຈາກ ອຸຍແນສໂກ ບາງກອກ (UNESCO Bangkok) ເຊິ່ງຢູ່ພາຍໃຕ້ໂຄງການພັດທະນາຂີດຄວາມສາມາດດ້ານການສຶກສາ (CapED) ພັດທະນາຂຶ້ນເພື່ອ 1) ການສະໜັບສະໜູນທາງດ້ານເຕັກນິກໃນການສ້າງຂີດຄວາມສາມາດລະດັບຊາດ ໃນການກຳນົດມາດຕະຖານສະມັດຖະພາບດ້ານ ICT ຂອງຄູທີ່ສອດຄ່ອງກັບນະໂຍບາຍ ແລະ ເປົ້າໝາຍດ້ານການສຶກສາຂອງປະເທດ; 2) ເສີມສ້າງຄວາມສາມາດຂອງວິທະຍາໄລຄູ ແລະ ສະຖາບັນທີ່ເຮັດໜ້າທີ່ຝຶກອົບຮົມຄູໃນການພັດທະນາ ແລະ ຈັດຕັ້ງປະຕິບັດຫຼັກສູດການຝຶກອົບຮົມຄູ ໂດຍສອດແຊກມາດຕະຖານສະມັດຖະພາບດ້ານ ICT ເຂົ້າໃນຫຼັກສູດການຝຶກອົບຮົມຄູ ແລະ ສອດແຊກເຂົ້າໃນຫຼັກສູດສ້າງຄູ.

ມາດຕະຖານສະມັດຖະພາບດ້ານ ICT ຂອງຄູໃນ ສປປ ລາວ ສະບັບນີ້ ໄດ້ພັດທະນາຂຶ້ນໃນຮູບແບບ ແຍກດ່ຽວ ແລະ ປັບດັດ ເຊິ່ງເນື້ອໃນລວມມີ:

- 3 ລະດັບຄວາມສາມາດ ຄື: ລະດັບ 1 ຂັ້ນພື້ນຖານ; ລະດັບ 2 ຂັ້ນນຳໃຊ້ໄດ້; ລະດັບ 3 ຂັ້ນນຳໃຊ້ໄດ້ດີ.
- 6 ຂົງເຂດຄວາມຮູ້ ຄື: ຄວາມເຂົ້າໃຈ ກ່ຽວກັບແນວທາງການນຳໃຊ້ ICT ເຂົ້າໃນການສຶກສາ; ຫຼັກສູດ ແລະ ການປະເມີນຜົນ; ວິທີສິດສອນ; ການນຳໃຊ້ທັກສະທາງດ້ານດິຈິຕອນ; ການຈັດຕັ້ງ ແລະ ການບໍລິຫານຄຸ້ມຄອງ; ການຮຽນຮູ້ວິຊາຊີບຄູ.
- 11 ມາດຕະຖານ ແລະ 47 ຕົວຊີ້ບອກ (ລະດັບ 1: ຂັ້ນພື້ນຖານ ມີ 14 ຕົວຊີ້ບອກ; ລະດັບ 2: ຂັ້ນນຳໃຊ້ໄດ້ ມີ 16 ຕົວຊີ້ບອກ; ລະດັບ 3: ຂັ້ນນຳໃຊ້ໄດ້ດີ ມີ 17 ຕົວຊີ້ບອກ).

ມາດຕະຖານສະມັດຖະພາບດ້ານ ICT ຂອງຄູ ໃນ ສປປ ລາວ ໄດ້ຮັບການພັດທະນາຂຶ້ນໂດຍການຮ່ວມມືດ້ານວິຊາການຈາກກົມສ້າງຄູ, ຫ້ອງການຄະນະກຳມາທິການແຫ່ງຊາດລາວເພື່ອອຸຍແນສໂກ ກົມຮ່ວມມືກັບຕ່າງປະເທດ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ສູນພັດທະນາຄູ, ສະຖາບັນພັດທະນາບໍລິຫານການສຶກສາ, ວິທະຍາໄລຄູຫຼວງພະບາງ, ບ້ານເກິນ, ດົງຄຳຊ້າງ, ສະຫວັນນະເຂດ, ຕາງໜ້າຄູສອນມັດທະຍົມຈາກ ນະຄອນຫຼວງວຽງຈັນ ແລະ ທີມງານຊ່ຽວຊານຈາກ ອຸຍແນສໂກ ບາງກອກ.

ຄະນະພັດທະນາມາດຕະຖານສະມັດຖະພາບຄັ້ງນີ້ ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງທຸກໆພາກສ່ວນທີ່ໄດ້ໃຫ້ການຮ່ວມມື ສະໜັບສະໜູນດ້ານງົບປະມານ, ວິຊາການ ແລະ ຂໍ້ມູນຕ່າງໆ ຈົນສຳເລັດຜົນໃນຂັ້ນພື້ນຖານ ເພື່ອໃຫ້ສາມາດນຳໃຊ້ໄດ້ຢ່າງເປັນເອກະພາບກັນໃນທົ່ວປະເທດ. ເຖິງຢ່າງໃດກໍຕາມ ມາດຕະຖານສະບັບນີ້ ກໍອາດປະສະຈາກບໍ່ໄດ້ໃນຂໍ້ຂາດຕົກບົກຜ່ອງຕ່າງໆ ຈຶ່ງຂໍຄວາມຮ່ວມມືຈາກບັນດາທ່ານທີ່ນຳໄປໃຊ້ຊ່ວຍປະກອບຄຳຄິດເຫັນໃຫ້ທີມງານ ເພື່ອຈະນຳໄປປັບປຸງໃຫ້ດີຂຶ້ນໃນຕໍ່ໜ້າ.

ກົມສ້າງຄູ, ວັນທີ 28 ທັນວາ 2021

**ຫົວໜ້າກົມ**

ສາດ ພັນລັກ

# ສາລະບານ


1 ສະພາບລວມ ມາດຕະຖານສະມັດຖະພາບດ້ານ ICT ຂອງຄູ ໃນ ສປປ ລາວ.....................1

- 3 ລະດັບຄວາມສາມາດ.......................................................................................1
- 6 ຂົງເຂດຄວາມຮູ້...............................................................................................1
- 47 ຕົວຊີ້ບອກ......................................................................................................1

2 ລາຍລະອຽດ ລະດັບຕ່າງໆຂອງມາດຕະຖານສະມັດຖະພາບດ້ານ ICT ຂອງຄູ ໃນ ສປປ ລາວ....2

- ລະດັບ 1: ຂັ້ນພື້ນຖານ.......................................................................................2
- ລະດັບ 2: ຂັ້ນນຳໃຊ້ໄດ້......................................................................................2
- ລະດັບ 3: ຂັ້ນນຳໃຊ້ໄດ້ດີ....................................................................................2

3 ມາດຕະຖານສະມັດຖະພາບດ້ານ ICT ຂອງຄູ ໃນແຕ່ລະຂົງເຂດຄວາມຮູ້.........................3

1. ຄວາມເຂົ້າໃຈ ກ່ຽວກັບແນວທາງການນຳໃຊ້ ICT ເຂົ້າໃນການສຶກສາ...................................3
2. ຫຼັກສູດ ແລະ ການປະເມີນຜົນ.............................................................................4
3. ວິທີສິດສອນ......................................................................................................5
4. ການນຳໃຊ້ທັກສະທາງດ້ານດິຈິຕອນ.......................................................................6
5. ການຈັດຕັ້ງ ແລະ ການບໍລິຫານຄຸ້ມຄອງ.....................................................................7
6. ການຮຽນຮູ້ວິຊາຊີບຄູ..........................................................................................8

# 1 ສະພາບລວມ ມາດຕະຖານສະມັດຖະພາບດ້ານ ICT ຂອງຄູ ໃນ ສປປ ລາວ

- ພັດທະນາມາດຕະຖານສະມັດຖະພາບແບບແຍກດ່ຽວ ແລະ ປັບດັດ (ກໍ່ສ້າງ ແລະ ບຳລຸງ)
- 3 ລະດັບຄວາມສາມາດ:
  - ລະດັບ 1 ຂັ້ນພື້ນຖານ;
  - ລະດັບ 2 ຂັ້ນນຳໃຊ້ໄດ້;
  - ລະດັບ 3 ຂັ້ນນຳໃຊ້ໄດ້ດີ.
- 6 ຂົງເຂດຄວາມຮູ້:

  1) ຄວາມເຂົ້າໃຈ ກ່ຽວກັບແນວທາງການນຳໃຊ້ ICT ເຂົ້າໃນການສຶກສາ;

  2) ຫຼັກສູດ ແລະ ການປະເມີນຜົນ;

  3) ວິທີສິດສອນ;

  4) ການນຳໃຊ້ທັກສະທາງດ້ານດິຈິຕອນ;

  5) ການຈັດຕັ້ງ ແລະ ການບໍລິຫານຄຸ້ມຄອງ;

  6) ການຮຽນຮູ້ວິຊາຊີບຄູ.
- 11 ມາດຕະຖານ
- 47 ຕົວຊີ້ບອກ:

  ລະດັບ 1: ຂັ້ນພື້ນຖານ ມີ 14 ຕົວຊີ້ບອກ;

  ລະດັບ 2: ຂັ້ນນຳໃຊ້ໄດ້ ມີ 16 ຕົວຊີ້ບອກ;

  ລະດັບ 3: ຂັ້ນນຳໃຊ້ໄດ້ດີ ມີ 17 ຕົວຊີ້ບອກ.

# 2 ລາຍລະອຽດ ລະດັບຕ່າງຂອງມາດຕະຖານສະມັດຖະພາບດ້ານ ICT ຂອງຄູໃນ ສປປ ລາວ

| ລະດັບຄວາມສາມາດ | ລາຍລະອຽດໂດຍຫຍໍ້ |
|---|---|
| ລະດັບ 1: ຂັ້ນພື້ນຖານ | • ຄູ ຕ້ອງມີຄວາມເຂົ້າໃຈເຖິງບົດບາດຄວາມສຳຄັນ ຂອງການນຳໃຊ້ເຄື່ອງມື ICT ເຂົ້າໃນການຮຽນການສອນໃນທຸກຂັ້ນຮຽນ ໂດຍສະເພາະແມ່ນຕ້ອງມີຄວາມເຂົ້າໃຈເປົ້າໝາຍຂອງນະໂຍບາຍ ແລະ ບຸລິມະສິດທີ່ກ່ຽວຂ້ອງກັບການນຳໃຊ້ ICT ເຂົ້າໃນການສຶກສາ.<br>• ຄູ ຕ້ອງມີຄວາມສາມາດເລືອກ ແລະ ນຳໃຊ້ເຄື່ອງມື ICT ຕ່າງໆໃນລະດັບພື້ນຖານ ເພື່ອຊອກຫາວິທີການສ້າງສື່ການຮຽນການສອນ ແບບງ່າຍດາຍທີ່ຊ່ວຍສະໜັບສະໜູນ ແລະ ກະຕຸ້ນການຮຽນຮູ້ຂອງຜູ້ຮຽນ.<br>• ຄູ ຕ້ອງມີຄວາມຫ້າວຫັນຊອກຮູ້ ຮໍ່າຮຽນເອົາຄວາມຮູ້ ແລະ ທັກສະດ້ານດິຈິຕອນຂັ້ນພື້ນຖານ ໂດຍຜ່ານການຮຽນຮູ້ດ້ວຍຕົນເອງ ຫຼື ເຂົ້າຮ່ວມການຝຶກອົບຮົມ ເພື່ອສົ່ງເສີມການຮຽນຮູ້ດ້ານວິຊາຊີບຂອງຕົນເອງ. |
| ລະດັບ 2: ຂັ້ນນຳໃຊ້ໄດ | • ຄູ ຕ້ອງມີຄວາມຮູ້ທີ່ດີ ກ່ຽວກັບ ການນຳໃຊ້ເຄື່ອງມື ICT ຕ່າງໆ ແລະ ສາມາດນຳຄວາມຮູ້ ແລະ ທັກສະດ້ານດິຈິຕອນທີ່ໄດ້ຮຽນຮູ້ມາ ເພື່ອອຳນວຍຄວາມສະດວກໃຫ້ແກ່ຂະບວນການຮຽນການສອນຂອງພວກເຂົາໃຫ້ມີປະສິດທິພາບໃນລະດັບໃດໜຶ່ງ ເຊິ່ງສາມາດສົ່ງເສີມການຮຽນຮູ້ຂອງຜູ້ຮຽນ.<br>• ຄູ ຕ້ອງມີຄວາມສາມາດນຳເອົາແນວທາງນະໂຍບາຍ, ມະຕິຄຳສັ່ງ, ລະບຽບກົດໝາຍທີ່ກ່ຽວຂ້ອງກັບແຜນການພັດທະນາ ແລະ ການນຳໃຊ້ ICT ເຂົ້າໃນການສຶກສາໄປຈັດຕັ້ງປະຕິບັດຢ່າງແທດເໝາະ.<br>• ຄູ ຕ້ອງມີຄວາມສາມາດໃນການກຳນົດ, ອອກແບບກິດຈະກຳຕ່າງໆ ແລະ ນຳໃຊ້ເຄື່ອງມື ICT ໃຫ້ສອດຄ່ອງກັບຫຼັກການສິດສອນ ທີ່ສະໜັບສະໜູນການຮຽນຮູ້ດ້ວຍຕົນເອງ/ແບບອິດສະຫຼະ ແລະ ການຮຽນທີ່ເອົາຜູ້ຮຽນເປັນໃຈກາງ ເພື່ອບັນລຸເປົ້າໝາຍ ແລະ ບຸລິມະສິດທີ່ໄດ້ກຳນົດໄວ້.<br>• ຄູ ຕ້ອງມີຄວາມສາມາດນຳໃຊ້ວິທີການປະເມີນຜົນທີ່ສອດຄ່ອງ ແລະ ແທດເໝາະກັບສະພາບການຕົວຈິງ. |
| ລະດັບ 3: ຂັ້ນນຳໃຊ້ໄດ້ດີ | • ຄູ ສາມາດວາງແຜນ ແລະ ນຳໃຊ້ເຄື່ອງມື ICT ແລະ ຊັບພະຍາກອນດິຈິຕອນໃນລະດັບສູງຫຼາຍຮູບແບບເຂົ້າໃນການກະກຽມບົດສອນ ແລະ ກິດຈະກຳຕ່າງໆເຂົ້າໃນຂະບວນການສິດສອນຢ່າງຫຼາກຫຼາຍ ແລະ ແທດເໝາະກັບສະພາບແວດລ້ອມການຮຽນຮູ້ ເພື່ອຍົກສູງປະສິດທິພາບການສິດສອນໃຫ້ສູງຂຶ້ນ.<br>• ຄູ ຕ້ອງມີຄວາມສາມາດນຳໃຊ້ ICT ເພື່ອສົ່ງເສີມໃຫ້ຜູ້ຮຽນສາມາດນຳໃຊ້ ICT ເຂົ້າໃນການເຮັດວຽກທີ່ໄດ້ຮັບມອບໝາຍ ໃຫ້ເຮັດຮ່ວມກັນເພື່ອສ້າງຄວາມຮູ້ຜ່ານການແລກປ່ຽນປະສົບການ ແລະ ທັກສະຕ່າງໆ ເຊັ່ນ: ການຄົ້ນຄິດ, ວິເຄາະ, ປະດິດສ້າງ ແລະ ການເຮັດວຽກເປັນທີມ.<br>• ຄູ ຕ້ອງມີຄວາມສາມາດສ້າງແຜນ ແລະ ເປົ້າໝາຍ ໃນການຮຽນຮູ້ ເຊິ່ງສະແດງໃຫ້ເຫັນຜ່ານການສິດສອນຂອງພວກເຂົາຢ່າງຕໍ່ເນື່ອງ.<br>• ຄູ ຕ້ອງມີຄວາມສາມາດແນະນຳ ແລະ ແບ່ງປັນວິທີການສິດສອນ ແລະ ວິທີການປະເມີນຜົນການຮຽນຂອງຜູ້ຮຽນທີ່ມີປະສິດທິພາບ ແລະ ປະສິດທິຜົນກັບບັນດາຄູຜູ້ອື່ນໆ. |

# 3 ມາດຕະຖານສະມັດຖະພາບດ້ານ ICT ຂອງຄູ ໃນແຕ່ລະຂົງເຂດຄວາມຮູ້

| ຂົງເຂດຄວາມຮູ້ | 1. ຄວາມເຂົ້າໃຈ ກ່ຽວກັບແນວທາງການນຳໃຊ້ ICT ເຂົ້າໃນການສຶກສາ | |
|---|---|---|
| ມາດຕະຖານ | 1.1 ຮັບຮູ້ ແລະ ເຂົ້າໃຈວິໄສທັດ, ພາລະກິດ, ນະໂຍບາຍຕ່າງໆທີ່ກ່ຽວພັນເຖິງການນຳໃຊ້ ICT ເຂົ້າໃນການວາງແຜນ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນຂະບວນການຮຽນການສອນ | |
| ຕົວຊີ້ບອກຜົນການປະຕິບັດ ໂດຍລະດັບຄວາມສາມາດ | | |
| ລະດັບ 1<br>ຂັ້ນພື້ນຖານ | ລະດັບ 2<br>ຂັ້ນນຳໃຊ້ໄດ້ | ລະດັບ 3<br>ຂັ້ນນຳໃຊ້ໄດ້ດີ |
| 1.1. A1. ສາມາດບອກແນວທາງ, ນະໂຍບາຍທີ່ກ່ຽວກັບການນຳໃຊ້ ICT ເຂົ້າໃນການສຶກສາ ແລະ ແຜນພັດທະນາ ICT ເຂົ້າໃນການສຶກສາ ແລະ ກິລາ ໃຫ້ແກ່ຄູພາຍໃນໂຮງຮຽນ.<br><br>1.1. A2. ສົ່ງເສີມ ແລະ ອະທິບາຍທິດທາງ, ນະໂຍບາຍຕ່າງໆຂອງລັດຖະບານທີ່ກ່ຽວກັບການນຳໃຊ້ ICT ເຂົ້າໃນການສຶກສາ ແລະ ເຜີຍແຜ່ແຜນພັດທະນາ ICT ເຂົ້າໃນການສຶກສາ ແລະ ກິລາ ໃຫ້ແກ່ຄູພາຍໃນໂຮງຮຽນ, ຊຸມຊົນ ແລະ ເມືອງ. | 1.1. B1. ໝູນໃຊ້/ຜັນຂະຫຍາຍທິດທາງ, ນະໂຍບາຍຕ່າງໆຂອງລັດຖະບານທີ່ກ່ຽວກັບການນຳໃຊ້ ICT ເຂົ້າໃນການສຶກສາ ແລະ ປັບດັດແຜນພັດທະນາ ICT ເຂົ້າໃນການສຶກສາ ແລະ ກິລາ ໃຫ້ແທດເໝາະ ເພື່ອນຳໃຊ້ໃນຫ້ອງຮຽນ ແລະ ສະພາບຂອງໂຮງຮຽນແນໃສ່ອຳນວຍຄວາມສະດວກໃນຂະບວນການຈັດການຮຽນການສອນຂອງພວກເຂົາ ທີ່ສາມາດຊ່ວຍສະໜັບສະໜູນການປະຕິບັດການຮຽນຮູ້ຂອງຜູ້ຮຽນ.<br><br>1.1. B2. ນຳໃຊ້ ວິໄສທັດ, ເປົ້າໝາຍ ແລະ ແຜນການສຶກສາທາງດ້ານ ICT ຂອງຄູໃນລະດັບໂຮງຮຽນ ເຊິ່ງລວມເອົາ ICT ເປັນໜຶ່ງໃນມາດຕະຖານຄຸນນະພາບຂອງໂຮງຮຽນ. | 1.1. C1. ປະກອບສ່ວນໃນການພັດທະນາ ແລະ ແບ່ງປັນ/ຖ່າຍທອດແຜນຈັດຕັ້ງປະຕິບັດ ICT ໃຫ້ຄູຜູ້ອື່ນໆ ແລະ ໃຫ້ການແນະນຳນະໂຍບາຍໃໝ່ ກ່ຽວກັບການນຳໃຊ້ ICT ສຳລັບນະວັດຕະກຳຂອງການສຶກສາໃໝ່ໆ.<br><br>1.1. C2. ພັດທະນາວິໄສທັດ ແລະ ແຜນ ກ່ຽວກັບການຮຽນຮູ້ ICT ເພື່ອທີ່ຈະເສີມຂະຫຍາຍການພັດທະນາວິຊາຊີບຂອງຄູຢ່າງຕໍ່ເນື່ອງ ແລະ ປະຕິບັດຂະບວນການຮຽນການສອນຂອງເຂົາເຈົ້າຢ່າງມີປະສິດທິພາບ. |

| ຂົງເຂດຄວາມຮູ້ | 2. ຫຼັກສູດ ແລະ ການປະເມີນຜົນ | |
|---|---|---|
| ມາດຕະຖານ | 2.1 ເລືອກ ແລະ ປະສົມປະສານ ICT ທີ່ແທດເໝາະເຂົ້າໃນການວາງແຜນ ແລະ ການຈັດຕັ້ງຜັນຂະຫຍາຍມາດຕະຖານຫຼັກສູດການຮຽນການສອນ | |
| ຕົວຊີ້ບອກຜົນການປະຕິບັດ ໂດຍລະດັບຄວາມສາມາດ | | |
| ລະດັບ 1<br>ຂັ້ນພື້ນຖານ | ລະດັບ 2<br>ຂັ້ນນຳໃຊ້ໄດ້ | ລະດັບ 3<br>ຂັ້ນນຳໃຊ້ໄດ້ດີ |
| 2.1. A1. ເຂົ້າໃຈມາດຕະຖານຂອງຫຼັກສູດ ແລະ ເລືອກເຄື່ອງມື ICT ທີ່ແທດເໝາະ ເພື່ອສະໜັບສະໜູນການບັນລຸບັນດາມາດຕະຖານດັ່ງກ່າວນັ້ນ. | 2.1. B1. ນຳໃຊ້ເຄື່ອງມື ICT ທີ່ແທດເໝາະ ເພື່ອສະໜັບສະໜູນຜູ້ຮຽນໃຫ້ບັນລຸມາດຕະຖານຂອງຫຼັກສູດ.<br><br>2.1. B2. ອອກແບບບົດສອນທີ່ມີການປະສົມປະສານ ICT ເພື່ອຈະບັນລຸມາດຕະຖານຂອງຫຼັກສູດ ແລະ ສະໜັບສະໜູນການສ້າງຄວາມຮູ້ໃຫ້ຜູ້ຮຽນ ແລະ ການຮຽນຮູ້ຢ່າງຫ້າວຫັນ. | 2.1. C1. ສະໜັບສະໜູນ ແລະ ແນະນຳເພື່ອນຮ່ວມງານໃນການນຳໃຊ້ເຄື່ອງມື ICT ເພື່ອສະໜັບສະໜູນຜູ້ຮຽນໃຫ້ບັນລຸມາດຕະຖານຂອງຫຼັກສູດ.<br><br>2.1. C2. ສະໜັບສະໜູນ ແລະ ແນະນຳເພື່ອນຮ່ວມງານໃນການອອກແບບບົດສອນທີ່ມີການປະສົມປະສານ ICT ເພື່ອສະໜັບສະໜູນຜູ້ຮຽນໃຫ້ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບມາດຕະຖານຂອງຫຼັກສູດ. |
| ມາດຕະຖານ | 2.2 ນຳໃຊ້ ICT ເຂົ້າໃນການອອກແບບວິທີການປະເມີນທີ່ຫຼາກຫຼາຍ ເພື່ອປະເມີນການຮຽນຂອງຜູ້ຮຽນ | |
| 2.2. A1. ລະບຸວິທີການປະເມີນ ແລະ ເຄື່ອງມື ICT ທີ່ແທດເໝາະ ເພື່ອປະເມີນການຮຽນຂອງນັກຮຽນ. | 2.2. B1. ນຳໃຊ້ເຄື່ອງມື ICT ເພື່ອອອກແບບວິທີການປະເມີນ ແລະ ຈັດຕັ້ງການປະເມີນຢ່າງຕໍ່ເນື່ອງ. | 2.2. C1. ສະໜັບສະໜູນ ແລະ ແນະນຳເພື່ອນຮ່ວມງານໃນການນຳໃຊ້ເຄື່ອງມື ICT ເຂົ້າໃນການອອກແບບ ແລະ ຈັດຕັ້ງປະຕິບັດວິທີການປະເມີນ. |

| ຂົງເຂດຄວາມຮູ້ | 3. ວິທີສິດສອນ | |
|---|---|---|
| ມາດຕະຖານ | 3.1 ພັດທະນາກິດຈະກໍາການຮຽນຕ່າງໆ ທີ່ມີການປະສົມປະສານ ICT ເຂົ້າໃນຂະບວນການຮຽນການສອນ ເພື່ອສະໜັບສະໜູນຄວາມຕ້ອງການຂອງວິຊາຮຽນ ແລະ ວິທີການສິດສອນ | |
| ຕົວຊີ້ບອກຜົນການປະຕິບັດ ໂດຍລະດັບຄວາມສາມາດ | | |
| ລະດັບ 1<br>ຂັ້ນພື້ນຖານ | ລະດັບ 2<br>ຂັ້ນນໍາໃຊ້ໄດ້ | ລະດັບ 3<br>ຂັ້ນນໍາໃຊ້ໄດ້ດີ |
| 3.1. A1. ເລືອກເຄື່ອງມື ICT, ແອັບພລິເຄຊັນ ແລະ ຊັບພະຍາກອນດິຈິຕອນທີ່ກ່ຽວຂ້ອງ ແລະ ແທດເໝາະ ເພື່ອສະໜັບສະໜູນການຮັບເອົາຄວາມຮູ້ລາຍວິຊາ ແລະ ທັກສະອື່ນໆ ຂອງຜູ້ຮຽນ. | 3.1. B1. ນໍາໃຊ້ເຄື່ອງມື ICT, ໂປຣແກຣມນໍາໃຊ້ ແລະຊັບພະຍາກອນດິຈິຕອນທີ່ກ່ຽວຂ້ອງ ແລະ ແທດເໝາະໃນການພັດທະນາກິດຈະກໍາການຮຽນ ເພື່ອບັນລຸເປົ້າໝາຍຂອງການຮຽນ. | 3.1. C1. ສະໜັບສະໜູນ ແລະ ແນະນໍາເພື່ອນຮ່ວມງານໃນການນໍາໃຊ້ເຄື່ອງມື ICT, ແອັບພລິເຄຊັນ ທີ່ກ່ຽວຂ້ອງ ແລະ ແທດເໝາະ, ຊັບພະຍາກອນດິຈິຕອນ ແລະ ວິທີການໃນການຈັດຕັ້ງການຮຽນການສອນທີ່ມີການປະສົມປະສານ ICT. |
| ມາດຕະຖານ | 3.2 ໃຫ້ຜູ້ຮຽນມີສ່ວນຮ່ວມໃນກິດຈະກໍາທີ່ຫຼາກຫຼາຍ ທີ່ມີການນໍາໃຊ້ ICT ເພື່ອສົ່ງເສີມການຮຽນແບບເນັ້ນເອົາຜູ້ຮຽນເປັນໃຈກາງ ແນ່ໃສ່ປັບປຸງທັກສະການຄົ້ນຄິດທີ່ມີການວິເຄາະ, ການມີຫົວຄິດປະດິດສ້າງ, ການຮ່ວມມື, ການສື່ສານ ແລະ ການຮຽນຮູ້ດ້ານອາລົມຈິດ ແລະ ສັງຄົມ | |
| 3.2. A1. ເລືອກເຄື່ອງມື ICT, ແອັບພລິເຄຊັນ, ຊັບພະຍາກອນດິຈິຕອນ ແລະ ກິດຈະກໍາການຮຽນທີ່ກ່ຽວຂ້ອງ ແລະ ແທດເໝາະ ເພື່ອສະໜັບສະໜູນການຮຽນທີ່ເນັ້ນເອົາຜູ້ຮຽນເປັນໃຈກາງ. | 3.2. B1. ອອກແບບບົດຮຽນທີ່ມີການປະສົມປະສານ ICT ເພື່ອຮັບປະກັນການຮຽນທີ່ເນັ້ນເອົາຜູ້ຮຽນເປັນໃຈກາງ ແລະ ສຸມໃສ່ການພັດທະນາທັກສະການຄົ້ນຄິດທີ່ມີການວິເຄາະ, ການມີຫົວຄິດປະດິດສ້າງ, ການຮ່ວມມື ແລະ ການສື່ສານ.<br><br>3.2. B2. ອອກແບບວິທີການຮຽນ ແລະ ສື່ການຮຽນທີ່ມີການປະສົມປະສານ ICT ເພື່ອສະໜັບສະໜູນຄວາມເປັນເຈົ້າການໃນການຮຽນຮູ້ຂອງຜູ້ຮຽນເອງ. | 3.2. C1. ແລກປ່ຽນ ແລະໃຫ້ການແນະນໍາຄູຜູ້ອື່ນໆກ່ຽວກັບການອອກແບບວິທີການຮຽນ ແລະ ກິດຈະກໍາຕ່າງໆ ທີ່ເນັ້ນເອົາຜູ້ຮຽນເປັນໃຈກາງ ໂດຍນໍາໃຊ້ ICT.<br><br>3.2. C2. ສະໜັບສະໜູນ ແລະ ນໍາພາເພື່ອນຮ່ວມງານໃນການອອກແບບວິທີການຮຽນ ແລະ ກິດຈະກໍາຕ່າງໆທີ່ເນັ້ນເອົາຜູ້ຮຽນເປັນໃຈກາງ ໂດຍນໍາໃຊ້ ICT. |

| ຂົງເຂດຄວາມຮູ້ | 4. ການນຳໃຊ້ທັກສະທາງດ້ານດິຈິຕອນ | |
|---|---|---|
| ມາດຕະຖານ | 4.1 ຮູ້ການປະຕິບັດໜ້າທີ່ຂອງອຸປະກອນ ICT, ຊອບແວ ແລະ ເຄື່ອງມື, ອິນເຕີເນັດ ແລະ ຊັບພະຍາກອນອອນລາຍທີ່ຫຼາກຫຼາຍ ແລະສາມາດນຳໃຊ້/ປະສົມປະສານສິ່ງເຫຼົ່ານີ້ເຂົ້າໃນຂະບວນການສຶກສາຮຽນຮູ້ | |
| ຕົວຊີ້ບອກຜົນການປະຕິບັດ ໂດຍລະດັບຄວາມສາມາດ | | |
| ລະດັບ 1<br>ຂັ້ນພື້ນຖານ | ລະດັບ 2<br>ຂັ້ນນຳໃຊ້ໄດ້ | ລະດັບ 3<br>ຂັ້ນນຳໃຊ້ໄດ້ດີ |
| 4.1. A1. ອະທິບາຍການປະຕິບັດໜ້າທີ່ພື້ນຖານຂອງອຸປະກອນ ICT, ແອັບພຣິເຄຊັນ ແລະ ຊັບພະຍາກອນດິຈິຕອນຕ່າງໆ.<br><br>4.1. A2. ເລືອກເຄື່ອງມື ICT, ໂປຣແກຣມນຳໃຊ້ ແລະ ຊັບພະຍາກອນດິຈິຕອນທີ່ແທດເໝາະສຳລັບຂະບວນການຮຽນການສອນ ແລະ ວຽກງານບໍລິຫານ. | 4.1. B1. ນຳໃຊ້ເຄື່ອງມື ICT, ແອັບພຣິເຄຊັນ, ແລະ ຊັບພະຍາກອນດິຈິຕອນຕ່າງໆທີ່ແທດເໝາະ ສຳລັບຂະບວນການຮຽນການສອນ ແລະ ວຽກງານບໍລິຫານ.<br><br>4.1. B2. ນຳໃຊ້ເຄື່ອງມື ICT, ແອັບພຣິເຄຊັນ, ແລະ ຊັບພະຍາກອນດິຈິຕອນທີ່ແທດເໝາະ ເພື່ອໃຫ້ມີສ່ວນຮ່ວມໃນການຮຽນ ແລະ ການສື່ສານ. | 4.1. C1. ສະໜັບສະໜູນ ແລະ ນຳພາເພື່ອນຮ່ວມງານ ແລະ ຜູ້ຮຽນໃນການນຳໃຊ້ເຄື່ອງມື ICT, ແອັບພຣິເຄຊັນ, ແລະ ຊັບພະຍາກອນດິຈິຕອນທີ່ແທດເໝາະໃນຂະບວນການຮຽນການສອນ ແລະ ວຽກງານບໍລິຫານ.<br>4.1. C2. ສະໜັບສະໜູນ ແລະ ນຳພາເພື່ອນຮ່ວມງານ ແລະ ຜູ້ຮຽນໃນການນຳໃຊ້ເຄື່ອງມື ICT, ແອັບພຣິເຄຊັນ ແລະ ຊັບພະຍາກອນດິຈິຕອນເພື່ອໃຫ້ມີສ່ວນຮ່ວມໃນການຮຽນ ແລະ ການສື່ສານ<br>4.1. C3. ພັດທະນາ ແລະ ແບ່ງປັນຊັບພະຍາກອນດິຈິຕອນ ເພື່ອສະໜັບສະໜູນການຮຽນ. |
| ມາດຕະຖານ | 4.2 ສາມາດຄົ້ນຫາ, ເຂົ້າເຖິງ, ປະເມີນ, ນຳໃຊ້ ແລະ ສ້າງສື່ ແລະ ຂໍ້ມູນໂດຍການປະຕິບັດ ຕາມຄວາມຮູ້ກ່ຽວກັບສື່ ແລະ ຂໍ້ມູນຂ່າວສານ ແລະ ທັກສະການເປັນພົນລະເມືອງດິຈິຕອນ ເພື່ອສະໜັບສະໜູນເປົ້າໝາຍຂອງການຮຽນການສອນ | |
| 4.2. A1. ອະທິບາຍຫຼັກການທີ່ສຳຄັນຂອງສື່ ແລະ ຄວາມຮູ້ດ້ານຂໍ້ມູນຂ່າວສານ ແລະ ການເປັນພົນລະເມືອງດິຈິຕອນ ລວມມີຄວາມສ່ຽງ ແລະ ໂອກາດໃນການນຳໃຊ້ ICT ແລະ ອິນເຕີເນັດ. | 4.2. B1. ປະຕິບັດຕາມຫຼັກການທີ່ສຳຄັນຂອງສື່ ແລະ ຄວາມຮູ້ດ້ານຂໍ້ມູນຂ່າວສານ ແລະ ການເປັນພົນລະເມືອງດິຈິຕອນໃນເວລານຳໃຊ້ເຄື່ອງມື ICT, ແອັບພຣິເຄຊັນ ແລະ ຊັບພະຍາກອນດິຈິຕອນຕ່າງໆ. | 4.2. C1. ນຳພາ ແລະ ໃຫ້ຄຳແນະນຳຄູ ແລະ ຜູ້ຮຽນໃຫ້ປະຕິບັດຕາມຫຼັກການຂອງສື່ ແລະ ຄວາມຮູ້ດ້ານຂໍ້ມູນຂ່າວສານ ແລະ ການເປັນພົນລະເມືອງດິຈິຕອນໃນເວລານຳໃຊ້ເຄື່ອງມື ICT, ແອັບພຣິເຄຊັນ ແລະ ຊັບພະຍາກອນດິຈິຕອນຕ່າງໆ. |

| ຂົງເຂດຄວາມຮູ້ | 5. ການຈັດຕັ້ງ ແລະ ການບໍລິຫານຄຸ້ມຄອງ | |
|---|---|---|
| ມາດຕະຖານ | 5.1 ຈັດຕັ້ງສະພາບແວດລ້ອມການຮຽນ ແລະ ຄຸ້ມຄອງຫ້ອງຮຽນທີ່ຊ່ວຍສະໜັບສະໜູນຜູ້ຮຽນ ແລະ ກຸ່ມຜູ້ຮຽນຜູ້ທີ່ມີຄວາມສາມາດ ແລະ ຄວາມຕ້ອງການທີ່ແຕກຕ່າງກັນ ເພື່ອຮັບປະກັນປະສິດທິພາບຂອງ ICT ທີ່ນຳໃຊ້ເຂົ້າໃນການຮຽນການສອນ | |
| ຕົວຊີ້ບອກຜົນການປະຕິບັດ ໂດຍລະດັບຄວາມສາມາດ | | |
| ລະດັບ 1<br>ຂັ້ນພື້ນຖານ | ລະດັບ 2<br>ຂັ້ນນຳໃຊ້ໄດ້ | ລະດັບ 3<br>ຂັ້ນນຳໃຊ້ໄດ້ດີ |
| 5.1. A1. ອະທິບາຍຜົນປະໂຫຍດຂອງສະພາບແວດລ້ອມການຮຽນການສອນທີ່ມີການປະສົມປະສານ ICT ສຳລັບຜູ້ຮຽນທີ່ມີຄວາມຮູ້ພື້ນຖານ, ຄວາມສາມາດ ແລະ ຄວາມຕ້ອງການທີ່ແຕກຕ່າງກັນ. | 5.1. B1. ວາງແຜນ, ຈັດຕັ້ງ ແລະ ສ້າງສະພາບແວດລ້ອມການຮຽນການສອນທີ່ມີການປະສົມປະສານ ICT ສຳລັບຜູ້ຮຽນທີ່ມີຄວາມຮູ້ພື້ນຖານ, ຄວາມສາມາດ ແລະ ຄວາມຕ້ອງການທີ່ແຕກຕ່າງກັນ. | 5.1. C1. ສະໜັບສະໜູນ ແລະ ນຳພາເພື່ອນຮ່ວມງານໃນການວາງແຜນ, ຈັດຕັ້ງ ແລະ ສ້າງສະພາບແວດລ້ອມການຮຽນການສອນທີ່ມີການປະສົມປະສານ ICT ສຳລັບຜູ້ຮຽນທີ່ມີຄວາມຮູ້ພື້ນຖານ, ຄວາມສາມາດ ແລະ ຄວາມຕ້ອງການທີ່ແຕກຕ່າງກັນ. |
| 5.1. A2. ເລືອກເຄື່ອງມື ICT, ແອັບພຣິເຄຊັນ, ຊັບພະຍາກອນດິຈິຕອນທີ່ກ່ຽວຂ້ອງ ແລະ ແທດເໝາະກັບວິທີການສອນເພື່ອສະໜັບສະໜູນຜູ້ຮຽນທຸກຄົນທີ່ມີຄວາມຮູ້ພື້ນຖານ, ຄວາມສາມາດ ແລະ ຄວາມຕ້ອງການທີ່ແຕກຕ່າງກັນ. | 5.1. B2. ນຳໃຊ້ເຄື່ອງມື ICT, ແອັບພຣິເຄຊັນ, ຊັບພະຍາກອນດິຈິຕອນທີ່ກ່ຽວຂ້ອງ ແລະ ແທດເໝາະກັບວິທີການສອນເພື່ອສະໜັບສະໜູນຜູ້ຮຽນທຸກຄົນທີ່ມີຄວາມຮູ້ພື້ນຖານ, ຄວາມສາມາດ ແລະ ຄວາມຕ້ອງການທີ່ແຕກຕ່າງກັນ. | 5.1. C2. ສະໜັບສະໜູນ ແລະ ນຳພາເພື່ອນຮ່ວມງານໃນການເລືອກ ແລະ ນຳໃຊ້ເຄື່ອງມື ICT, ແອັບພຣິເຄຊັນ, ຊັບພະຍາກອນດິຈິຕອນທີ່ກ່ຽວຂ້ອງ ແລະ ແທດເໝາະກັບວິທີການສອນ ເພື່ອສະໜັບສະໜູນຜູ້ຮຽນທຸກຄົນທີ່ມີຄວາມຮູ້ພື້ນຖານ, ຄວາມສາມາດ ແລະ ຄວາມຕ້ອງການທີ່ແຕກຕ່າງກັນ. |
| ມາດຕະຖານ | 5.2 ນຳໃຊ້ ICT ທີ່ຫຼາກຫຼາຍ ເພື່ອຄຸ້ມຄອງຂໍ້ມູນການຮຽນຂອງຜູ້ຮຽນ | |
| 5.2. A1. ອະທິບາຍການປະຕິບັດໜ້າທີ່ຂອງລະບົບຄຸ້ມຄອງຂໍ້ມູນການຮຽນ ເພື່ອຕິດຕາມ ແລະ ລາຍງານຄວາມຄືບໜ້າທາງດ້ານການຮຽນຂອງຜູ້ຮຽນ. | 5.2. B1. ນຳໃຊ້ລະບົບຄຸ້ມຄອງຂໍ້ມູນການຮຽນ ເພື່ອຕິດຕາມ ແລະ ລາຍງານຄວາມຄືບໜ້າທາງດ້ານການຮຽນຂອງຜູ້ຮຽນ. | 5.2. C1. ສະໜັບສະໜູນ ແລະ ນຳພາເພື່ອນຮ່ວມງານໃນການນຳໃຊ້ລະບົບຄຸ້ມຄອງຂໍ້ມູນການຮຽນ ເພື່ອຈັດກິດຈະກຳການຮຽນຕ່າງໆ, ການຕິດຕາມ ແລະ ລາຍງານຄວາມຄືບໜ້າທາງດ້ານການຮຽນຂອງຜູ້ຮຽນ. |

| ຂົງເຂດຄວາມຮູ້ | 6. ການຮຽນຮູ້ວິຊາຊີບຄູ | |
|---|---|---|
| ມາດຕະຖານ | 6.1 ນຳໃຊ້ ICT ເພື່ອການຮຽນຮູ້ດ້ານວິຊາຊີບຄູຢ່າງຕໍ່ເນື່ອງ | |
| ຕົວຊີ້ບອກຜົນການປະຕິບັດ ໂດຍລະດັບຄວາມສາມາດ | | |
| ລະດັບ 1<br>ຂັ້ນພື້ນຖານ | ລະດັບ 2<br>ຂັ້ນນຳໃຊ້ໄດ້ | ລະດັບ 3<br>ຂັ້ນນຳໃຊ້ໄດ້ດີ |
| 6.1. A1. ເລືອກເຄື່ອງມື ICT, ແອັບພຣິເຄຊັນ, ຊັບພະຍາກອນ ດິຈິຕອນທີ່ກ່ຽວຂ້ອງ ແລະ ແທດເໝາະ ເພື່ອຮຽນເອົາ ຄວາມຮູ້ທາງດ້ານເນື້ອໃນ ວິຊາສະເພາະ, ວິຊາຄູ ແລະ ເຕັກໂນໂລຊີ ສຳລັບ ການພັດທະນາວິຊາຊີບຄູ. | 6.1. B1. ນຳໃຊ້ເຄື່ອງມື ICT, ແອັບພຣິເຄຊັນ, ຊັບພະຍາກອນ ດິຈິຕອນທີ່ກ່ຽວຂ້ອງ ແລະ ແທດເໝາະ ເພື່ອພັດທະນາ ວິຊາຊີບຄູຢ່າງຕໍ່ເນື່ອງ. | 6.1. C1. ປະເມີນ ແລະ ທົບທວນຄືນ ການປະຕິບັດໜ້າທີ່ທາງດ້ານ ວິຊາຊີບຄູ ເພື່ອສົ່ງເສີມ ການພັດທະນາ ແລະ ນຳໃຊ້ ນະວັດຕະກຳໃໝ່. |
| ມາດຕະຖານ | 6.2 ເຂົ້າຮ່ວມກັບຊຸມຊົນອື່ນໆ, ແບ່ງປັນ ແລະ ປຶກສາຫາລື ກ່ຽວກັບອຸປະກອນ ແລະ ການນຳໃຊ້ວິທີການປະສົມປະສານ ICT ທີ່ມີປະສິດທິພາບສູງສຸດ ເຂົ້າໃນການຮຽນການສອນຢ່າງ ກວ້າງຂວາງ | |
| 6.2. A1. ລະບຸ, ຊອກຫາ ເຄືອຂ່າຍຄູ ແລະ ກຸ່ມພັດທະນາ ວິຊາຊີບຄູ ເພື່ອຮຽນຮູ້ວິຊາຊີບຄູ ໃນການຮຽນການສອນທີ່ ມີການປະສົມປະສານ ICT. | 6.2. B1. ນຳໃຊ້ເຄືອຂ່າຍຄູ ແລະ ກຸ່ມພັດທະນາວິຊາຊີບຄູ ເພື່ອຮຽນຮູ້ເຄື່ອງມື ICT, ແອັບພຣິເຄຊັນ, ຊັບພະຍາກອນ ດິຈິຕອນ, ວິທີການສອນທີ່ມີ ປະສິດທິພາບ ແລະ ຄວາມຮູ້ ທາງດ້ານວິຊາຊີບ ແນ່ໃສ່ສົ່ງເສີມ ເປົ້າໝາຍການພັດທະນາ ວິຊາຊີບຄູ. | 6.2. C1. ມີຄວາມຫ້າວຫັນ ໃນການປະກອບສ່ວນ, ແບ່ງປັນ ວິທີການປະຕິບັດໜ້າທີ່ທາງດ້ານ ວິຊາຊີບທີ່ມີປະສິດທິພາບ ແລະ ຄວາມຮູ້ວິຊາຊີບຄູໃນການຮຽນ ການສອນທີ່ມີການປະສົມປະສານ ICT ໃນເຄືອຂ່າຍຄູ ແລະ ກຸ່ມພັດທະນາວິຊາຊີບຄູ. |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມສ້າງຄູ                                                                 ເລກທີ 2042 /ສຄ
ນະຄອນຫຼວງວຽງຈັນ, ວັນທີ 28 ທັນວາ 2021

**ໜັງສືສະເໜີ**

ຮຽນ: ທ່ານ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ
ເລື່ອງ: ຂໍອະນຸມັດ ຮັບຮອງ ມາດຕະຖານສະມັດຖະພາບດ້ານ ICT ຂອງ ຄູ ໃນ ສປປ ລາວ.

- ອີງຕາມ ຂໍ້ຕົກລົງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍ ການແຕ່ງຕັ້ງ ຄະນະຮັບຜິດຊອບ ແລະ ຜູ້ເຂົ້າຮ່ວມໂຄງການຍົກລະດັບການຝຶກອົບຮົມຄູຜ່ານການນຳໃຊ້ ລະບົບດິຈິຕອນ ເພື່ອອຳນວຍຄວາມສະດວກໃນການຮຽນ-ການສອນທີ່ນຳໃຊ້ ICT, ສະບັບ ເລກທີ 7170/ສສກ, ລົງວັນທີ 29 ທັນວາ 2020.
- ອີງຕາມ ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດ ກອງປະຊຸມປຶກສາຫາລື ແລະ ຜ່ານຮ່າງ ມາດຕະຖານສະມັດຖະພາບດ້ານ ICT ຂອງຄູ ໃນ ສປປ ລາວ, ຄັ້ງວັນທີ 1 ທັນວາ 2021 ທີ່ ຫ້ອງປະຊຸມໄອຊີທີ ກະຊວງສຶກສາທິການ ແລະ ກິລາ ແລະ ທາງອອນລາຍ; ແລະ ກອງປະຊຸມ ຕິດຕາມ, ປັບປຸງ ແລະ ຮຽບຮຽງຮ່າງມາດຕະຖານສະມັດຖະພາບດ້ານ ICT ຂອງຄູ ໃນ ສປປ ລາວ, ຄັ້ງວັນທີ 13-14 ທັນວາ 2021 ທີ່ ຫ້ອງປະຊຸມກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ແລະ ທາງອອນລາຍ.

ກົມສ້າງຄູ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານຊາບວ່າ: ການພັດທະນາມາດຕະຖານ ສະມັດຖະພາບດ້ານ ICT ຂອງຄູ ໃນ ສປປ ລາວ ແມ່ນໄດ້ດຳເນີນພາຍໃຕ້ໂຄງການຍົກລະດັບການຝຶກ ອົບຮົມຄູຜ່ານການນຳໃຊ້ລະບົບດິຈິຕອນ ເພື່ອອຳນວຍຄວາມສະດວກໃນການຮຽນ-ການສອນທີ່ນຳໃຊ້ ICT; ເປັນໂຄງການໜຶ່ງທີ່ໄດ້ຮັບການສະໜັບສະໜູນ ແລະ ຮ່ວມມືຈາກ ອຸຍແນສໂກ ບາງກອກ (UNESCO Bangkok) ເຊິ່ງຢູ່ພາຍໃຕ້ໂຄງການຫຼັກໃນການພັດທະນາຂີດຄວາມສາມາດດ້ານການ ສຶກສາ (CapED). ຈຸດປະສົງຂອງໂຄງການນີ້ແມ່ນ ເພື່ອ 1) ການສະໜັບສະໜູນທາງດ້ານເຕັກນິກໃນ ການສ້າງຂີດຄວາມສາມາດລະດັບຊາດ ໃນການກຳນົດມາດຕະຖານສະມັດຖະພາບດ້ານ ICT ຂອງຄູທີ່ ສອດຄ່ອງກັບນະໂຍບາຍ ແລະ ເປົ້າໝາຍດ້ານການສຶກສາ ຂອງປະເທດ; 2) ເສີມສ້າງຄວາມສາມາດຂອງ ວິທະຍາໄລຄູ ແລະ ສະຖາບັນ ທີ່ເຮັດໜ້າທີ່ຝຶກອົບຮົມຄູໃນການພັດທະນາ ແລະ ຈັດຕັ້ງປະຕິບັດຫຼັກສູດ ການຝຶກອົບຮົມຄູ ໂດຍສອດແຊກມາດຕະຖານສະມັດຖະພາບດ້ານ ICT ເຂົ້າໃນຫຼັກສູດການຝຶກອົບຮົມ ຄູ ແລະ ສອດແຊກເຂົ້າໃນຫຼັກສູດສ້າງຄູ.

ການປະຕິບັດໂຄງການ ແມ່ນດຳເນີນເປັນ 2 ໄລຍະ ຄື: ນັບເດືອນ ຕຸລາ 2020 ຫາ ເດືອນ ກັນຍາ 2021 ແລະ ເດືອນ ຕຸລາ 2021 ຫາ ເດືອນ ເມສາ 2022. ປັດຈຸບັນ ສາມາດພັດທະນາມາດຕະຖານສະມັດຖະພາບດ້ານ ICT ຂອງຄູ ໃນ ສປປ ລາວ ທີ່ໄດ້ມີການປຶກສາຫາລືລະດັບຊາດ ແລະ ປັບປຸງຮຽບຮຽງຄືນດ້ານເນື້ອໃນ ຕາມຄຳຄິດເຫັນຕ່າງໆໃຫ້ສົມບູນ ແລະ ຄົບຖ້ວນແລ້ວ. ພາຍຫຼັງທີ່ໄດ້ຮັບການອະນຸມັດໃນຄັ້ງນີ້ ກໍຈະໄດ້ນຳໃຊ້ເຂົ້າໃນການປຶກສາຫາລື ເພື່ອສອດແຊກເຂົ້າໃນຫຼັກສູດສ້າງຄູ ໂດຍສະເພາະແມ່ນສາຍສ້າງຄູອະນຸບານ, ປະຖົມ ແລະ ມັດທະຍົມ ເພື່ອໃຫ້ດຳເນີນສຳເລັດໄດ້ໃນທຸກກິດຈະກຳທີ່ໄດ້ກຳນົດໄວ້ໃນໂຄງການ. ລາຍລະອຽດຂອງມາດຕະຖານສະມັດຖະພາບດ້ານ ICT ຂອງຄູ ໃນ ສປປ ລາວ ໄດ້ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອຂໍອະນຸມັດ ຮັບຮອງມາດຕະຖານສະມັດຖະພາບດ້ານ ICT ຂອງຄູ ໃນ ສປປ ລາວ ແລະ ມີທິດຊີ້ນຳຕາມທາງຄວນດ້ວຍ.

**ຄຳເຫັນ**
**ທ່ານ ຮອງລັດຖະມົນຕີ**
**ກະຊວງສຶກສາທິການ ແລະ ກິລາ**

[illegible]

6/12/21

ບ.ສິສຸກ ວິງວິຈິດ

**ຫົວໜ້າກົມ**

ຫາດ ພັນລັກ

ສະໜັບສະໜູນໂດຍ ອຸຍແນສໂກ

TH/DOC/IQE/22/014-LAO